ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

~~~~@@@~~~~

ແຂວງອັດຕະປື

ພະແນກອຸດສາຫະກຳ ແລະ ການຄ້າ

ເລກທີ 0169/ອຄ.ອປ

ອັດຕະປື, ວັນທີ 20 MAR 2017

## ແຈ້ງການ

ເຖິງ : ບັນດາບໍລິສັດ ແລະໂຮງງານປຸງແຕ່ງໄມ້ ພາຍໃນແຂວງ ແລະຕ່າງແຂວງທົ່ວປະເທດຊາບ.

ເລື່ອງ : ເຊີນເຂົ້າຮ່ວມປະມູນຊື້ໄມ້ ( ບ້ວງໄມ້ຍຶດເຂດປ່າສະຫງວນ ແລະ ບ້ວງໄມ້ທ້ອນໂຮມຂອງແຂວງ ອັດຕະປື ).

- ອີງຕາມ ຄຳສັ່ງຂອງນາຍົກລັດຖະມົນຕີ ສະບັບເລກທີ 17/ນຍ, ລົງວັນທີ 22 ກັນຍາ 2008 ວ່າດ້ວຍການເພີ່ມທະວີຄວາມເຂັ້ມງວດໃນການຄຸ້ມຄອງ, ປົກປັກຮັກສາປ່າໄມ້ ແລະທຸລະກິດໄມ້.
- ອີງຕາມ ຂໍ້ຕົກລົງຂອງລັດຖະມົນຕີ ກະຊວງອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 0035/ອຄ,ຈພງ, ລົງວັນທີ 06 ມັງກອນ 2012 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງ.
- ອີງຕາມ ຄຳສັ່ງຂອງນາຍົກລັດຖະມົນຕີ ສະບັບເລກທີ 15/ນຍ, ລົງວັນທີ 13 ພຶດສະພາ 2016 ວ່າດ້ວຍການເພີ່ມທະວີຄວາມເຂັ້ມງວດໃນການຄຸ້ມຄອງ ແລະ ກວດກາ ການຂຸດຄົ້ນໄມ້, ເຄື່ອນຍ້າຍໄມ້ ແລະທຸລະກິດໄມ້.
- ອີງຕາມ ຄຳສັ່ງແນະນຳຂອງ ກະຊວງອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 0336/ອຄ.ກຂອ, ລົງວັນທີ 13 ມີນາ 2017 ເລື່ອງ : ແນະນຳການຈັດຕັ້ງປະມູນຂາຍໄມ້ທີ່ຍຶດເປັນຂອງລັດ.

ພະແນກອຸດສາຫະກຳ ແລະ ການຄ້າແຂວງ ອັດຕະປື ຖືເປັນກຽດແຈ້ງການມາຍັງບັນດາທ່ານຜູ້ອຳນວຍການ ບໍລິສັດ ແລະ ໂຮງງານປຸງແຕ່ງໄມ້ ພາຍໃນແຂວງ ແລະຕ່າງແຂວງທົ່ວປະເທດ ເຂົ້າຮ່ວມການປະມູນຊື້ - ຂາຍໄມ້ ບ້ວງໄມ້ຍຶດເຂດປ່າສະຫງວນ ແລະບ້ວງໄມ້ທ້ອນໂຮມຂອງແຂວງ ອັດຕະປື. ຈຳນວນທັງໝົດ : 1.427 ທ່ອນ/ຕົບ, ບໍລິມາດ : 4.405,932 ມ3. ເຊິ່ງເປັນຄັ້ງທີ II ຂອງການຂາຍໄມ້ໃນຮູບແບບທີ I ຕາມແຈ້ງການຂອງກະຊວງ ສະບັບເລກທີ 0336/ອຄ.ກຂອ ລົງວັນທີ 13 ມີນາ 2017 ໃນນັ້ນ :

+ ໄມ້ຫວງຫ້າມ, ໄມ້ພິເສດ : ຈຳນວນ 438 ຕົບ/ທ່ອນ, ບໍລິມາດ : 97,546 ມ3. ໃນນັ້ນ :
- ▪ ໄມ້ຕົບ : ຈຳນວນທັງໝົດ : 425 ຕົບ, ບໍລິມາດ : 68,285 ມ3.
  - ໄມ້ດູ່ ຈຳນວນ : 333 ຕົບ, ບໍລິມາດ : 28,866 ມ3.
  - ໄມ້ຈຳປາປ່າ ຈຳນວນ : 92 ຕົບ, ບໍລິມາດ : 39,419 ມ3.
- ▪ ໄມ້ທ່ອນ : ຈຳນວນທັງໝົດ : 13 ທ່ອນ, ບໍລິມາດ : 29,261 ມ3.
  - ໄມ້ຈຳປາປ່າ ຈຳນວນ : 13 ທ່ອນ, ບໍລິມາດ : 29,261 ມ3.

+ ໄມ້ຄຸ້ມຄອງ 1,2,3 : ຈຳນວນທັງໝົດ 989 ຕົບ/ທ່ອນ, ບໍລິມາດ : 4.308,386 ມ3. ໃນນັ້ນ :
- ▪ ໄມ້ຕົບ : ຈຳນວນທັງໝົດ : 73 ຕົບ, ບໍລິມາດ : 54,874 ມ3.
  - ໄມ້ຍົມຜາ ຈຳນວນ : 7 ຕົບ, ບໍລິມາດ : 6,717 ມ3.
  - ໄມ້ແຄນຫີນ ຈຳນວນ : 2 ຕົບ, ບໍລິມາດ : 0,764 ມ3.
  - ໄມ້ຊີ ຈຳນວນ : 2 ຕົບ, ບໍລິມາດ : 1,184 ມ3.
  - ໄມ້ບາກ ຈຳນວນ : 20 ຕົບ, ບໍລິມາດ : 19,437 ມ3.
~~~~

- ໄມ້ຂາວ ຈຳນວນ : 2 ຕົບ, ບໍລິມາດ : 4,806 ມ3.
- ໄມ້ແຕ້ ຈຳນວນ : 40 ຕົບ, ບໍລິມາດ : 21,966 ມ3.

▪ ໄມ້ທ່ອນ : ຈຳນວນທັງໝົດ : 916 ທ່ອນ, ບໍລິມາດ : 4.253,512 ມ3.
- ໄມ້ຍາງ ຈຳນວນ : 815 ທ່ອນ, ບໍລິມາດ : 4.043,450 ມ3.
- ໄມ້ບາກ ຈຳນວນ : 27 ທ່ອນ, ບໍລິມາດ : 93,728 ມ3.
- ໄມ້ຂະຍອມ ຈຳນວນ : 1 ທ່ອນ, ບໍລິມາດ : 2,030 ມ3.
- ໄມ້ຊີ ຈຳນວນ : 19 ທ່ອນ, ບໍລິມາດ : 32,923 ມ3.
- ໄມ້ບົນຜາ ຈຳນວນ : 9 ທ່ອນ, ບໍລິມາດ : 18,840 ມ3.
- ໄມ້ແຄນຫີນ ຈຳນວນ : 25 ທ່ອນ, ບໍລິມາດ : 33,865 ມ3.
- ໄມ້ຂາວ ຈຳນວນ : 2 ທ່ອນ, ບໍລິມາດ : 3,328 ມ3.
- ໄມ້ເຕັງ ຈຳນວນ : 1 ທ່ອນ, ບໍລິມາດ : 2,718 ມ3.
- ໄມ້ລີ້ນມໍ ຈຳນວນ : 1 ທ່ອນ, ບໍລິມາດ : 3,244 ມ3.
- ໄມ້ກ້ານເຫຼືອງ ຈຳນວນ : 1 ທ່ອນ, ບໍລິມາດ : 3,303 ມ3.
- ໄມ້ເປືອຍ ຈຳນວນ : 3 ທ່ອນ, ບໍລິມາດ : 1,538 ມ3.
- ໄມ້ຕິ້ວ ຈຳນວນ : 2 ທ່ອນ, ບໍລິມາດ : 2,291 ມ3.
- ໄມ້ບົກ ຈຳນວນ : 2 ທ່ອນ, ບໍລິມາດ : 0,552 ມ3.
- ໄມ້ນ້ຳກ້ຽງ ຈຳນວນ : 3 ທ່ອນ, ບໍລິມາດ : 3,173 ມ3.
- ໄມ້ຮັງ ຈຳນວນ : 1 ທ່ອນ, ບໍລິມາດ : 0,430 ມ3.
- ໄມ້ SP ຈຳນວນ : 4 ທ່ອນ, ບໍລິມາດ : 8,099 ມ3.

- ໃຫ້ບັນດາທ່ານເຂົ້າມາພົວພັນຊື້ຊອງປະມູນ ທີ່ພະແນກອຸດສາຫະກຳ ແລະການຄ້າ ແຂວງອັດຕະປື ( ຂະແໜງການນຳເຂົ້າ ແລະສົ່ງອອກ ) ໃນໂມງລັດຖະການ ກຳນົດ 15 ວັນ ( ນັບແຕ່ວັນທີ 20/03/2017 ຫາວັນທີ 07/04/2017 ).
- ສຳລັບມື້ເປີດຊອງປະມູນ ແມ່ນວັນທີ 10/04/2017 ເວລາ 09 : 30 ໂມງເຊົ້າ, ສະຖານທີ່ : ຫ້ອງປະຊຸມ ພະແນກອຸດສາຫະກຳ ແລະການຄ້າແຂວງ ອັດຕະປື.
- ກະລຸນາຖືຊອງປະມູນໄວ້ກັບຕົນເອງ ຈົນຮອດ ເວລາ 09 : 30 ໂມງເຊົ້າ ຂອງວັນທີ 10/04/2017 ຈຶ່ງໃຫ້ມາມອບ - ສົ່ງ ນຳຄະນະກຳມະການປະມູນ ທີ່ພະແນກອຸດສາຫະກາ ແລະການຄ້າແຂວງ ອັດຕະປື, ຖ້າກາຍຖືວ່າສະຫຼະສິດ.
- ລາຄາຊອງປະມູນ : 1.000.000 ກີບ / ຊອງ ( ສຳລັບຄ່າຊອງປະມູນນັ້ນແມ່ນບໍ່ໄດ້ສົ່ງຄືນ ).

ດັ່ງນັ້ນ, ຈຶ່ງແຈ້ງການມາຍັງທ່ານ ເພື່ອເຂົ້າຮ່ວມປະມູນຊື້ - ຂາຍໄມ້ ຕາມກຳນົດເວລາຂ້າງເທິງດ້ວຍ.

ຫົວໜ້າພະແນກອຸດສາຫະກຳ ແລະການຄ້າແຂວງ,

ວິຊຽນ ສະໜານໄຊ
Vixieno SANANSAY


ຕິດຕໍ່ພົວພັນ
- ທ່ານ ພະທັດໄຊ 020 2229 2298.
- ນາງ ຄານດາວອນ 020 2242 3777.
- ທ່ານ ທິດປະກາຍສີ 020 5553 4456.